**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ປະທານປະເທດ

ເລກທີ 289 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສັນຊາດລາວ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 061/ສພຊ, ລົງວັນທີ 01 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍສັນຊາດລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 025/ຄປຈ, ລົງວັນທີ 28 ພະຈິກ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍສັນຊາດລາວ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ**

**ເລກທີ** 061 **/ສພຊ**

**ນະຄອນຫຼວງວຽງຈັນ, ວັນທີ** 01/11/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍຂອງ ວັນທີ 1 ພະຈິກ 2017.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 29 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 1 ພະຈິກ 2017

# ກົດໝາຍ
# ວ່າດ້ວຍສັນຊາດລາວ
# (ສະບັບປັບປຸງ)

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາການ ໃຫ້ສັນຊາດ, ຖອນສັນຊາດຄືນ, ໃຫ້ປະສັນຊາດ ແລະ ໃຫ້ສັນຊາດລາວຄືນ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແນໃສ່ຍົກສູງກຽດສັກສີ ແລະ ຄວາມຮັບຜິດຊອບຂອງພົນລະເມືອງລາວຕໍ່ປະເທດຊາດ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີ, ນ້ຳໃຈຮັກຊາດຂອງພົນລະເມືອງລາວ ເພີ່ມທະວີສາຍກ່ຽວພັນສະໜິດແໜ້ນລະຫວ່າງ ລັດ ສປປ ລາວ ກັບພົນລະເມືອງລາວ.

**ມາດຕາ 2 (ປັບປຸງ) ສັນຊາດລາວ**

ສັນຊາດລາວ ແມ່ນ ສາຍກ່ຽວພັນຢ່າງສະໜິດແໜ້ນ ທາງດ້ານການເມືອງ ແລະ ກົດໝາຍ ລະຫວ່າງບຸກຄົນ ກັບ ລັດ ສປປ ລາວ ຊຶ່ງສະແດງອອກເຖິງ ສິດ ແລະ ພັນທະຂອງພົນລະເມືອງລາວ ທີ່ມີຕໍ່ ລັດ ສປປ ລາວ, ສິດ ແລະ ຄວາມຮັບຜິດຊອບຂອງລັດ ສປປ ລາວ ທີ່ມີຕໍ່ພົນລະເມືອງລາວ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

ຜູ້ທີ່ມີສັນຊາດລາວ ຖືວ່າແມ່ນພົນລະເມືອງລາວ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການໃຫ້ສັນຊາດລາວ** ໝາຍເຖິງ ການຕົກລົງໃຫ້ສັນຊາດລາວ ແກ່ພົນລະເມືອງຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້;
2. **ການໃຫ້ສັນຊາດລາວຄືນ** ໝາຍເຖິງ ການຕົກລົງໃຫ້ສັນຊາດລາວຄືນ ແກ່ຜູ້ທີ່ມີເຊື້ອຊາດລາວສັນຊາດຕ່າງປະເທດ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້;

3. **ການຖອນສັນຊາດລາວຄືນ** ໝາຍເຖິງ ການຕົກລົງໃຫ້ຖອນສັນຊາດລາວຄືນ ແກ່ບຸກຄົນທີ່ໄດ້ສັນຊາດລາວແລ້ວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້;

4. **ການປະສັນຊາດລາວ** ໝາຍເຖິງ ການຕົກລົງໃຫ້ພົນລະເມືອງລາວ ປະສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;

5. **ຜູ້ທີ່ມີເຊື້ອຊາດລາວ** ໝາຍເຖິງ ຜູ້ທີ່ເກີດຈາກ ພໍ່ ແລະ ແມ່ ຫຼື ພໍ່ ຫຼື ແມ່ ເປັນພົນລະເມືອງລາວ;

6. **ການຂາດສາຍພົວພັນທາງດ້ານກົດໝາຍກັບລັດ ສປປ ລາວ** ໝາຍເຖິງ ການທີ່ບຸກຄົນໃດໜຶ່ງໄປຢູ່ຕ່າງປະເທດໂດຍຂາດການຕິດຕໍ່ພົວພັນ ແລະ ບໍ່ໄດ້ປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວທີ່ມີຕໍ່ລັດ ສປປ ລາວ ຜ່ານສະຖານເອກອັກຄະລັດຖະທູດລາວ ຫຼື ສະຖານກົງສຸນໃຫຍ່ຂອງ ສປປ ລາວ ຢູ່ຕ່າງປະເທດ;

7. **ພົນລະເມືອງຕ່າງປະເທດ** ໝາຍເຖິງ ຄົນຕ່າງປະເທດ ແລະ ຄົນຕ່າງດ້າວ;

8. **ຄົນຕ່າງປະເທດ** ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນ ຊຶ່ງເຂົ້າມາ ສປປ ລາວ ຊົ່ວຄາວ ຫຼື ຍາວນານ ເພື່ອປະຕິບັດໜ້າທີ່ໃດໜຶ່ງ, ເມື່ອໝົດກຳນົດແລ້ວກໍກັບຄືນ. ບຸກຄົນເຫຼົ່ານີ້ ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

9. **ຄົນຕ່າງດ້າວ** ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນແຕ່ເຂົ້າມາຕັ້ງຖິ່ນຖານ, ອາໄສຢູ່ໃນ ສປປ ລາວ ຍາວນານ, ຖືບັດຕ່າງດ້າວ ແລະ ລັດຖະບານຂອງຄົນຕ່າງດ້າວນັ້ນ ກໍຍັງຮັບຮູ້ຢ່າງເປັນທາງການຢູ່;

10. **ຄົນບໍ່ມີສັນຊາດ** ໝາຍເຖິງ ບຸກຄົນທີ່ອາໄສຢູ່ໃນດິນແດນຂອງ ສປປ ລາວ ຊຶ່ງບໍ່ແມ່ນພົນລະເມືອງລາວ ແລະ ບໍ່ສາມາດຢັ້ງຢືນວ່າ ຕົນມີສັນຊາດໃດ;

11. **ພົນລະເມືອງກິດຕິມະສັກ** ໝາຍເຖິງ ຄົນຕ່າງປະເທດ ຊຶ່ງລັດຖະບານຕົກລົງໃຫ້ນາມມະຍົດດັ່ງກ່າວ.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດກ່ຽວກັບວຽກງານສັນຊາດ**

ລັດອະນຸຍາດໃຫ້ ພົນລະເມືອງຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນເຊື້ອຊາດລາວ ທີ່ມີເງື່ອນໄຂມາດຕະຖານຄົບຖ້ວນຕາມກົດໝາຍສະບັບນີ້ ໄດ້ຮັບສັນຊາດລາວ.

ລັດໃຫ້ບູລິມະສິດແກ່ພົນລະເມືອງຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນເຊື້ອຊາດລາວ ທີ່ມີຄຸນງາມຄວາມດີພົ້ນເດັ່ນຕໍ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໄດ້ຮັບສັນຊາດລາວ.

**ມາດຕາ 5 (ໃໝ່) ຫຼັກການກ່ຽວກັບວຽກງານສັນຊາດ**

ວຽກງານສັນຊາດ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວ;

3. ຮັບປະກັນການຮັກສາຄວາມລັບຂອງຊາດ, ຄວາມລັບທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງຕ່າງປະເທດ ແລະ ຄົນບໍ່ມີສັນຊາດຕາມກົດໝາຍ;

5. ຮັບປະກັນຄວາມເປັນເອກະພາບ, ວ່ອງໄວ, ໂປ່ງໃສ, ສະດວກ, ຖືກຕ້ອງ ແລະ ຍຸຕິທຳ.

**ມາດຕາ 6 ການໃຫ້ມີສັນຊາດດຽວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ອະນຸຍາດໃຫ້ພົນລະເມືອງລາວມີຫຼາຍສັນຊາດຄວບກັນ.

**ມາດຕາ 7 ການຮັກສາສັນຊາດລາວ**

ການແຕ່ງດອງ, ການຢ່າຮ້າງຂອງພົນລະເມືອງລາວ ກັບບຸກຄົນທີ່ມີສັນຊາດອື່ນ ຫຼື ກັບບຸກຄົນທີ່ບໍ່ມີສັນຊາດນັ້ນ ຈະບໍ່ພາໃຫ້ມີການປ່ຽນແປງສັນຊາດລາວ.

ການໄດ້ ຫຼື ການເສຍສັນຊາດລາວຂອງຜົວ ຫຼື ເມຍ ຈະບໍ່ພາໃຫ້ສັນຊາດຂອງອີກຝ່າຍໜຶ່ງມີການປ່ຽນແປງ.

**ມາດຕາ 8 ການປົກປ້ອງພົນລະເມືອງ ລາວທີ່ຢູ່ຕ່າງປະເທດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ທີ່ອາໄສຢູ່ຕ່າງປະເທດ.

**ມາດຕາ 9 ການບໍ່ມອບໂອນພົນລະເມືອງລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະບໍ່ມອບໂອນພົນລະເມືອງລາວ ໃຫ້ແກ່ລັດຕ່າງປະເທດ.

**ມາດຕາ 10 ສິດໃນການຂໍເອົາສັນຊາດອື່ນ**

ພົນລະເມືອງລາວ ມີສິດຂໍເອົາສັນຊາດອື່ນ ແຕ່ຕ້ອງໄດ້ປະສັນຊາດລາວເສຍກ່ອນ. ການປະສັນຊາດລາວໃຫ້ປະຕິບັດ ຕາມມາດຕາ 23 ຂອງກົດໝາຍສະບັບນີ້.

**ມາດຕາ 11 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ, ຄົນເຊື້ອຊາດລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ພາຍໃນ ສປປ ລາວ ແລະ ພົນລະເມືອງລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ.

**ມາດຕາ 12 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັນຊາດດ້ວຍການແລກປ່ຽນບົດຮຽນ, ປະສົບການ, ຂໍ້ມູນ ຂ່າວສານ, ການຍົກລະດັບວິຊາສະເພາະ, ຄວາມຮູ້, ຄວາມສາມາດ ໃຫ້ແກ່ບຸກຄະລາກອນ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.